ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ 18 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 15 ມັງກອນ 2026

# ໜັງສືແຈ້ງເຊີນປະມູນ

ເຖິງ: ບັນດາວິສາຫະກິດ, ບໍລິສັດ ແລະ ຫ້າງຮ້ານຕ່າງໆ ທີ່ສະໜອງເຄື່ອງໃຊ້ຫ້ອງການ.

ເລື່ອງ: ເຊີນເຂົ້າຮ່ວມການປະມູນການສະໜອງເຄື່ອງໃຊ້ຫ້ອງການ ປະຈຳປີ 2026-2027.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການ, ສະບັບເລກທີ 444/ທຫລ, ລົງວັນທີ 14 ມິຖຸນາ 2022;
- ອີງຕາມ ແຜນຄວາມຕ້ອງການໃນການຈັດຊື້ເຄື່ອງໃຊ້ຫ້ອງການ ປະຈຳປີ 2026-2027.

ຫ້ອງການ ທະນາຄານແຫ່ງ ສປປ ລາວ (ທຫລ) ຂໍຖືເປັນກຽດແຈ້ງມາຍັງບັນດາວິສາຫະກິດ, ບໍລິສັດ ແລະ ຫ້າງຮ້ານຕ່າງໆ ຊາບວ່າ: ທຫລ ມີຄວາມຕ້ອງການຈະຈັດຊື້ເຄື່ອງໃຊ້ຫ້ອງການ ປະເພດ ນ້ຳມຶກປິ່ນເຕີ, ເຈ້ຍ, ເຄື່ອງຂຽນ, ເຄື່ອງໃຊ້ອະນາໄມ ແລະ ເຄື່ອງໃຊ້ໜ່ວຍລົດ ໃຫ້ບັນດາກົມກອງຂອງ ທຫລ ປະຈຳປີ 2026-2027.

ສະນັ້ນ, ຈຶ່ງແຈ້ງມາຍັງບັນດາວິສາຫະກິດ, ບໍລິສັດ ແລະ ຫ້າງຮ້ານຕ່າງໆ ທີ່ມີຄວາມສົນໃຈ ເພື່ອເຂົ້າຮ່ວມການປະມູນສະໜອງເຄື່ອງໃຊ້ດັ່ງກ່າວ ໂດຍພາກສ່ວນກ່ຽວຂ້ອງທີ່ຈະເຂົ້າຮ່ວມ ຕ້ອງມີມາດຕະຖານ-ເງື່ອນໄຂເບື້ອງຕົ້ນດັ່ງລຸ່ມນີ້:

**I. ໄລຍະທີ 1 ຂັ້ນຕອນການຂາຍຊອງປະມູນ:** ຜູ້ທີ່ສາມາດຊື້ຊອງປະມູນໄດ້ຕ້ອງມີເງື່ອນໄຂຄົບຖ້ວນ ຄື:

1. ມີໃບທະບຽນວິສາຫະກິດ ແລະ ໃບອະນຸຍາດດຳເນີນທຸລະກິດ ທີ່ຂະແໜງການກ່ຽວຂ້ອງໄດ້ອະນຸຍາດທີ່ນຳໃຊ້ໄດ້ໃນປັດຈຸບັນ;
2. ມີໃບຢັ້ງຢືນການມອບພັນທະອາກອນ ປະຈຳປີ 2024;
3. ມີໃບຢັ້ງຢືນຖານະການເງິນ ຫຼື ຍອດເຫຼືອເງິນຝາກ ຢູ່ທະນາຄານທຸລະກິດໃດໜຶ່ງ ແລະໃບລາຍງານບັນຊີສຳຮອງ ຍ້ອນຫຼັງ 3 ເດືອນ (ເດືອນ 10-12 ປີ 2025);
4. ມີປະສົບການດຳເນີນທຸລະກິດທີ່ກ່ຽວຂ້ອງ ຢ່າງໜ້ອຍ 3 ປີ ຂຶ້ນໄປ (ມີເອກະສານ ຫຼື ຫຼັກຖານຢັ້ງຢືນມາພ້ອມ);

ໝາຍເຫດ: ບໍລິສັດທີ່ຈະເຂົ້າຮ່ວມຊື້ຊອງປະມູນ ຕ້ອງປະກອບ ແລະ ສຳເນົາເອກະສານຕາມ 4 ລາຍການຂ້າງເທິງຢ່າງຄົບຖ້ວນ ແລະ ມີການຢັ້ງຢືນຈາກຜູ້ອຳນວຍການບໍລິສັດກ່ຽວຂ້ອງມາພ້ອມ, ສຳລັບມູນຄ່າຊື້ຊອງປະມູນແມ່ນລາຄາ 2,000,000 ກີບ/ຊອງ, ຊຶ່ງມູນຄ່າດັ່ງກ່າວ ຈະບໍ່ຖືກສົ່ງຄືນ ບໍ່ວ່າກໍລະນີໃດໆ.

**II. ໄລຍະທີ 2 ຂັ້ນຕອນການປະມູນ:** ຜູ້ທີ່ໄດ້ຊື້ຊອງປະມູນ ຕ້ອງປະຕິບັດຕາມຂັ້ນຕອນການປະມູນ ຄື:

1. ຕ້ອງປະກອບເອກະສານປະມູນໃຫ້ຄົບຖ້ວນຕາມທີ່ລະບຸໄວ້ໃນເອກະສານ TOR;



Scanned with CamScanner

2. ສໍາລັບມື້ເປີດຊອງປະມູນ ທຫລ ຈະແຈ້ງຕາມພາຍຫຼັງ ແລະ ຜູ້ເຂົ້າຮ່ວມການປະມູນ ຕ້ອງຖືຊອງປະມູນ (ຊອງລາຄາ ແລະ ເອກະສານກ່ຽວຂ້ອງ ຕາມເງື່ອນໄຂທີ່ກໍານົດໄວ້) ຂອງຕົນມາພ້ອມ ໃນມື້ເປີດຊອງຕົວຈິງ ໂດຍຈະເປີດຊອງປະມູນ (ລາຄາ) ຂອງແຕ່ລະພາກສ່ວນພ້ອມກັນ ຊ່ອງໜ້າກັບຄະນະຮັບຜິດຊອບກ່ຽວຂ້ອງ;

3. ຖ້າໄດ້ຮັບການຄັດເລືອກ ຈະໄດ້ເຊັນສັນຍາຮ່ວມວຽກກັນ.

ບັນດາວິສາຫະກິດ, ບໍລິສັດ ແລະ ຫ້າງຮ້ານຕ່າງໆ ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນ ສາມາດພົວພັນຊື້ຊອງປະມູນຢູ່ ພະແນກບໍລິຫານ, ຫ້ອງການ ທຫລ, ຕັ້ງຢູ່ບ້ານ ຊຽງຢືນ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ ໝາຍເລກໂທລະສັບ 021 241 268 ແຕ່ວັນທີ...16... ມັງກອນ ຫາ...15...ກຸມພາ 2026 ໃນວັນເວລາລັດຖະການ.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງບັນດາວິສາຫະກິດ, ບໍລິສັດ ແລະ ຫ້າງຮ້ານຕ່າງໆ ເພື່ອຊາບ ແລະ ເຂົ້າຮ່ວມການປະມູນໃນຄັ້ງນີ້ດ້ວຍ.

ຮອງ ຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເພັດສະໝອນ ແສງຈັນ

ໝາຍເຫດ: ຕິດຕໍ່ໂທ 021 241268;
ແລະ 020 55 222 888.



Scanned with CamScanner